ກຸ່ມບໍລິສັດ ທ່ອງທ່ຽວ ວັດທະນະທຳລາວ ມະຫາຊົນ
Lao Culture Tourism Public Group Company

ເລກທີ.....077...../ບທວລ

ນະຄອນຫຼວງວຽງຈັນ, ວັນທີ.....30 APR 2026.....

ໜັງສືລາຍງານ

ເຖິງ : - ທ່ານຫົວໜ້າສຳນັກງານຄະນະກຳມະການຄຸ້ມຄອງຫຼັກຊັບລາວ
- ທ່ານຜູ້ອຳນວຍການ ຕະຫຼາດຫຼັກຊັບລາວ
- ບັນດາຜູ້ຖືຮຸ້ນຂອງກຸ່ມບໍລິສັດທ່ອງທ່ຽວ ວັດທະນະທຳລາວ ມະຫາຊົນ

ເລື່ອງ : ຂໍລາຍງານສາເຫດຂອງການຈັດກອງປະຊຸມສາມັນຜູ້ຖືຮຸ້ນປະຈຳປີ 2025 ລ່າຊ້າ.

- ອີງຕາມ ຂໍ້ຕົກລົງວ່າດ້ວຍການລາຍງານ ແລະ ເປີດເຜີຍຂໍ້ມູນ ສະບັບເລກທີ 15/ຄຄຊ, ລົງວັນທີ 11 ທັນວາ 2024;
- ອີງຕາມ ລະບຽບວ່າດ້ວຍການເປີດເຜີຍຂໍ້ມູນ ສະບັບເລກທີ 008/ຕລຊລ, ລົງວັນທີ 26 ພະຈິກ 2018;

ຜູ້ອຳນວຍການ ກຸ່ມບໍລິສັດ ທ່ອງທ່ຽວ ວັດທະນະທຳລາວ ມະຫາຊົນ ຂໍຂໍ້ຖືເປັນກຽດລາຍງານມາຍັງທ່ານເພື່ອຊາບ ກ່ຽວກັບການເປີດເຜີຍຂໍ້ມູນຕາມຮອບວຽນບັນຊີປະຈຳປີ 2025 ໂດຍສະເພາະເອກະສານລາຍງານການເງິນປະຈຳປີ 2025 ບໍລິສັດ ບໍ່ສາມາດເປີດເຜີຍຂໍ້ມູນດັ່ງກ່າວຜ່ານຊ່ອງຕະຫຼາດຫຼັກຊັບລາວໄດ້ ຕາມວັນເດືອນ ຕາມລະບຽບການທີ່ກ່ຽວຂ້ອງ ໄດ້ ເນື່ອງຈາກຜູ້ກວດສອບຍັງບໍ່ສາມາດສົ່ງບົດລາຍງານການເງິນປະຈຳປີ 2025 ໃຫ້ ບໍລິສັດ ໄດ້ຍ້ອນ: ກຳລັງສັງລວມຂໍ້ມູນ ທີ່ໃດ້ຮັບທັງໝົດໂດຍສະເພາະລາຍການທຸລະກຳທີ່ບໍລິສັດໄດ້ດຳເນີນຢູ່ເພື່ອມາວິເຄາະຜົນກະທົບຂອງໜ້າ ບົດລາຍງານຂອງຜູ້ ກວດສອບເຊິ່ງຈະໃຊ້ເວລາປະມານ 1-2 ອາທິດ, ຄາດວ່າຈະສຳເລັດ ແລະ ສາມາດເປີດເຜີຍຂໍ້ມູນໄດ້ໃນວັນທີ 5/05/2026 ນີ້.

ສະນັ້ນ,ຈຶ່ງຂໍລາຍງານເຫດຜົນດັ່ງກ່າວ ມາຍັງສຳນັກງານຄະນະກຳມະການຄຸ້ມຄອງຫລັກຊັບ (ສຄຄຊ), ຕະຫຼາດຫຼັກຊັບ ລາວ (ຕລຊລ) ແລະ ຜູ້ຖືຮຸ້ນຂອງ ກຸ່ມບໍລິສັດ ເພື່ອຮັບຊາບ, ຫວັງຢ່າງຍິ່ງວ່າຄົງຈະໄດ້ຮັບການພິຈາລະນາຈາກທ່ານຕາມທາງ ຄວນດ້ວຍ.

ຜູ້ອຳນວຍການ ບໍລິສັດ,

ໄພບູລີ ເພັ້ຍເຫຼົ່ຍ